ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການແຫ່ງຊາດເພື່ອຕ້ານ
ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ
ສຳນັກງານຂໍ້ມູນຕ້ານການຟອກເງິນ

ເລກທີ: 1710 /ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 27 AUG 2025

# ແຈ້ງການ

ເຖິງ: ຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການເພີ່ມທະວີຄວາມເອົາໃຈໃສ່ໃນການພົວພັນທຸລະກິດ ຫຼື ທຸລະກຳກັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ຕັ້ງຢູ່ປະເທດທີ່ນອນໃນບັນຊີເທົາ ແລະ ບັນຊີດຳ ຂອງອົງການຕ້ານການຟອກເງິນສາກົນ.

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 64/ສພຊ ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 18/ຄຕຟງ, ລົງວັນທີ 10 ຕຸລາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການເອົາໃຈໃສ່ລູກຄ້າ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ສະບັບເລກທີ 11/ຄຕຟງ, ລົງວັນທີ 29 ພຶດສະພາ 2025.

ສຳນັກງານຂໍ້ມູນຕ້ານການຟອກເງິນ ຂໍຖືເປັນກຽດແຈ້ງມາຍັງ ບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ[1] ໃນຂອບເຂດທົ່ວປະເທດ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ ໂດຍນຳໃຊ້ມາດຕະການທີ່ເໝາະສົມ ໃນການຊອກຮູ້ ຫຼື ລະມັດລະວັງໃນເວລາໃຫ້ບໍລິການ, ເຮັດທຸລະກຳ ຫຼື ສ້າງສາຍພົວພັນທຸລະກິດໃດໜຶ່ງ ກັບສະຖາບັນການເງິນ ແລະ ທະນາຄານທຸລະກິດ ຫຼື ຫົວໜ່ວຍທີ່ມີໜ້າທີ່ລາຍງານອື່ນ ທີ່ຕັ້ງຢູ່ປະເທດທີ່ນອນໃນບັນຊີເທົາ ແລະ ບັນຊີດຳ ຂອງອົງການຕ້ານການຟອກເງິນສາກົນ (ຫຼື Financial Action Task Force "FATF") ຊຶ່ງເປັນບັນດາປະເທດທີ່ມີຂໍ້ບົກຜ່ອງ ໃນດ້ານວຽກງານ

[1] ໝາຍເຖິງ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມາດຕາ 15 (ປັບປຸງ) ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແມ່ນ ນິຕິບຸກຄົນ ແລະ ບຸກຄົນ ທີ່ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງມີ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການ ຊັບສິນເໝືອນຈິງ, ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້ ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ, ຫົວໜ່ວຍ ແລະ ບຸກຄົນອື່ນ ຕາມການກຳນົດຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.



ສຳນັກງານຂໍ້ມູນຕ້ານການຟອກເງິນ, ຖະໜົນຍອນເນ່, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19 ໂທລະສານ: (856) 021 265320, ໂທລະສັບ: (856) 021 264624 Email: amlio@bol.gov.la; www.amlio.gov.la

ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ທັງນີ້, ກໍ່ເພື່ອປ້ອງກັນບໍ່ໃຫ້ບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ ຂອງ ສປປ ລາວ ຖືກສວຍໃຊ້ເປັນເຄື່ອງມືຂອງກຸ່ມຄົນທີ່ພົວພັນກັບການກະທຳຜິດ ຫຼື ອາຊະຍາກຳ ຫຼື ເປັນແຫຼ່ງຂອງການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ດັ່ງມີລາຍລະອຽດຂອງລາຍຊື່ບັນດາປະເທດ ທີ່ນອນໃນບັນຊີເທົາ ແລະ ບັນຊີດຳ ຂອງ FATF ແມ່ນໃຫ້ເຂົ້າເບິ່ງຕາມເວບໄຊທ໌ (ພ້ອມນີ້ກໍ່ສາມາດເຂົ້າຕິດຕາມການປັບປຸງ ເປັນແຕ່ລະໄລຍະ) ດັ່ງນີ້:

1. https://www.fatf-gafi.org/en/countries/black-and-grey-lists.html;
2. https://www.fatf-gafi.org/en/publications/High-risk-and-other-monitored-jurisdictions/Call-for-action-june-2025.html;
3. https://www.fatf-gafi.org/en/publications/High-risk-and-other-monitored-jurisdictions/increased-monitoring-june-2025.html.

ກໍລະນີ ຫາກມີການໃຫ້ບໍລິການ, ເຮັດທຸລະກຳ ຫຼື ສ້າງສາຍພົວພັນທຸລະກິດໃດໜຶ່ງ ກັບສະຖາບັນການເງິນ ແລະ ທະນາຄານທຸລະກິດ ຫຼື ຫົວໜ່ວຍທີ່ມີໜ້າທີ່ລາຍງານອື່ນ ລວມທັງບຸກຄົນ ແລະ ນິຕິບຸກຄົນໃດໜຶ່ງ ທີ່ຕັ້ງຢູ່ປະເທດທີ່ນອນໃນບັນຊີດັ່ງກ່າວ ແມ່ນໃຫ້ປະຕິບັດຕາມ ມາດຕາ 32 (ມາດຕະການເອົາໃຈໃສ່ລູກຄ້າແບບລົງເລິກ ສຳລັບ ປະເທດທີ່ມີຄວາມສ່ຽງ) ຂອງຂໍ້ຕົກລົງວ່າດ້ວຍ ການເອົາໃຈໃສ່ລູກຄ້າ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ສະບັບເລກທີ 11/ຄຕຟງ, ລົງວັນທີ 29 ພຶດສະພາ 2025.

ແຈ້ງການສະບັບນີ້ປ່ຽນແທນ ແຈ້ງການ ການເພີ່ມທະວີຄວາມເອົາໃຈໃສ່ໃນການພົວພັນທຸລະກິດກັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ທີ່ຕັ້ງຢູ່ປະເທດທີ່ນອນໃນບັນຊີເທົາ ແລະ ບັນຊີດຳ ທີ່ອີງການຕ້ານການຟອກເງິນສາກົນ ສະບັບເລກທີ 382/ສຕຟງ, ລົງວັນທີ 03 ມີນາ 2025.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເພີ່ມທະວີຄວາມເອົາໃຈໃສ່ຕາມເນື້ອໃນຈິດໃຈຂ້າງເທິງນີ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ວ່າການຫົວໜ້າສຳນັກງານ

ວິນຄຳ ລຸນທອນ

ຕິດຕໍ່ປະສານງານ: ສຳນັກງານຂໍ້ມູນຕ້ານການຟອກເງິນ ໂທ: 021 262277.